**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ
ກອງທຶນຫຼຸດຜ່ອນຄວາມທຸກຍາກ

ເລກທີ 0089 /ທລຍ
ນະຄອນຫຼວງວຽງຈັນ, ວັນທີ 05 DEC 2025

# ບົດລາຍງານ

**ຮຽນ:** ທ່ານຫົວໜ້າກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ທີ່ນັບຖື.

**ເລື່ອງ:** ລາຍງານຫຍໍ້ຜົນການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2025 ແລະ ທິດທາງແຜນການປີ 2026 ຂອງ ກອງທຶນຫຼຸດຜ່ອນຄວາມທຸກຍາກ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ສະບັບເລກທີ 1255/ກສ, ລົງວັນທີ 12 ກັນຍາ 2025;
- ອີງຕາມ ໜັງສືທາງລັດຖະການຂອງກົມແຜນການ ແລະ ການຮ່ວມມື ສະບັບເລກທີ 5905/ກຜຮ, ລົງວັນທີ 25 ພະຈິກ 2025.

ກອງທຶນຫຼຸດຜ່ອນຄວາມທຸກຍາກ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ກ່ຽວກັບ ຜົນການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2025 ແລະ ທິດທາງແຜນການປີ 2026 ຂອງ ກອງທຶນຫຼຸດຜ່ອນຄວາມທຸກຍາກ, ດັ່ງລຸ່ມນີ້:

## I. ການເຄື່ອນໄຫວວຽກງານໂດຍຫຍໍ້

### 1.1. ສະພາບລວມ

ໃນປີ 2025, ກອງທຶນຫຼຸດຜ່ອນຄວາມທຸກຍາກ ໃນຖານະເປັນຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ ໃນການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ (ພາກລັດ, ຄູ່ຮ່ວມພັດທະນາ ແລະ ຜູ້ປະກອບການ) ຈັດຕັ້ງປະຕິບັດວຽກງານ ຕາມດຳລັດວ່າດ້ວຍ ກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວສະເພາະ ພາຍໃຕ້ການຊີ້ນຳ ແລະ ຄຸ້ມຄອງ ຂອງສະພາບໍລິຫານກອງທຶນຫຼຸດຜ່ອນຄວາມທຸກຍາກ, ມີພາລະບົດບາດເປັນເສນາທິການ ແລະ ກອງເລຂາ ໃຫ້ແກ່ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ (ໃນນາມເປັນປະທານສະພາບໍລິຫານກອງທຶນຫຼຸດຜ່ອນຄວາມທຸກຍາກ) ແລະ ສະພາບໍລິຫານໃນການຂົນຂວາຍລະດົມທຶນ ແລະ ຈັດຕັ້ງປະຕິບັດໂຄງການຮ່ວມມືພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ ຈຳນວນໜຶ່ງ ຢູ່ບັນດາເມືອງທຸກຍາກໃນຂອບເຂດທົ່ວປະເທດ. ວຽກງານພົ້ນເດັ່ນທີ່ຈັດຕັ້ງປະຕິບັດ ໃນປີ 2025 ມີດັ່ງນີ້:

- ສຳເລັດການຈັດກອງປະຊຸມສະພາບໍລິຫານ ທລຍ ໃນວັນທີ 10 ມັງກອນ 2025, ທີ່ແຂວງສາລະວັນ. ກອງປະຊຸມໄດ້ທົບທວນຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານທີ່ຜ່ານມາ ແລະ ຮັບຮອງເອົາທິດທາງແຜນການໃນຕໍ່ໜ້າ.
- ໄດ້ຮັບການຮັບຮອງ ແລະ ປະກາດໃຊ້ ແຜນລະດົມທຶນ ສຳລັບວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ໃນເຂດເມືອງທຸກຍາກ ຫ່າງໄກສອກຫຼີກ ຂອງ ສປປ ລາວ ສຳລັບປີ 2026-2030.
- ໄດ້ເອົາໃຈໃສ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຂົນຂວາຍທຶນ ຈາກ ບັນດາຄູ່ຮ່ວມພັດທະນາຕ່າງໆ. ມາເຖິງປະຈຸບັນນີ້, ອົງການພັດທະນາແຫ່ງປະເທດສະວິດເຊີແລນ (SDC) ໄດ້ປະກອບທຶນຊ່ວຍເຫຼືອລ້າ ຈຳນວນ 8.1 ລ້ານໂດລາສະຫະລັດ ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳ ຂອງ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ທີ່ ທະນາຄານໂລກ (WB) ເປັນຜູ້ໃຫ້ທຶນ (soft loan), ຊຶ່ງເປັນໂຄງການດຽວທີ່ ກອງທຶນຫຼຸດຜ່ອນຄວາມທຸກຍາກກຳລັງຈັດຕັ້ງປະຕິບັດຢູ່. ການຮັບຮອງເອົາທຶນດັ່ງກ່າວນີ້ ແມ່ນໄດ້

ສຳເລັດຂັ້ນຕອນການເຊັນສັນຍາຊ່ວຍເຫຼືອທາງດ້ານການເງິນ ລະຫວ່າງ ລັດຖະບານ ສປປ ລາວ ແລະ ອົງການ SDC ແລະ ສັນຍາດ້ານການເງິນ ສະບັບດັດແກ້ ລະຫວ່າງ ລັດຖະບານ ສປປ ລາວ ແລະ WB ເພື່ອຈັດສັນງົບປະມານບ້ວງຊ່ວຍເຫຼືອລ້າຈາກ ອົງການ SDC ເຂົ້າໃນກິດຈະກຳບູລິມະສິດສຳຄັນຂອງໂຄງການ ປຊກ.

- ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດ ໂຄງການ ປຊກ ຢ່າງໄດ້ຮັບຜົນດີ ແລະ ບັນລຸຜົນຕາມແຜນການທີ່ວາງໄວ້. ໃນທ້າຍເດືອນມີນາ 2025 ໄດ້ຮ່ວມເຮັດວຽກກັບຄະນະຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດໂຄງການ ປຊກ ຂອງ ທະນາຄານໂລກ ຄັ້ງທີ IV ແລະ ຄັ້ງທີ V ທ້າຍເດືອນສິງຫາ 2025, ຊຶ່ງຜົນການປະເມີນໂດຍລວມຊີ້ໃຫ້ເຫັນວ່າ ໂຄງການ ປຊກ ຖືກຈັດຕັ້ງປະຕິບັດດ້ວຍຄວາມຄືບໜ້າທີ່ດີ ແລະ ສຳເລັດຕາມແຜນການທີ່ວາງໄວ້.
- ສຳເລັດ ບົດລາຍງານການຈັດຕັ້ງປະຕິບັດໂຄງການ ປຊກ ປະຈຳປີ 2024 ແລະ ບົດລາຍງານ 06 ເດືອນຕົ້ນປີ 2025 (ສະບັບພາສາອັງກິດ) ແລະ ໄດ້ນຳສົ່ງໃຫ້ ທະນາຄານໂລກ.
- ໄດ້ແຈ້ງໃຫ້ ທະນາຄານໂລກ ຮັບຊາບເປັນທາງການ ກ່ຽວກັບ ການປັບປຸງການຈັດຕັ້ງທີ່ຕິດພັນກັບ ທລຍ ກໍ່ຄື ການໂຮມເອົາ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ລວມທັງການຈັດຕັ້ງປະຕິບັດໂຄງການ ປຊກ) ມາຢູ່ ພາຍໃຕ້ ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ.
- ໄດ້ສຳເລັດການຕ້ອນຮັບຄະນະຜູ້ແທນຈາກປະເທດປາປົວນິວກິນີ ທີ່ມາແລກປ່ຽນບົດຮຽນ ກ່ຽວກັບ ວຽກການແກ້ໄຂຄວາມທຸກຍາກ ເພື່ອຮັບມືກັບການປ່ຽນແປງດິນຟ້າອາກາດ ໃນຕົ້ນເດືອນກຸມພາ 2025.

### 1.2. ສັງລວມຫຍໍ້ການຈັດຕັ້ງປະຕິບັດໂຄງການ ປຊກ

ປະຈຸບັນ ກອງທຶນຫຼຸດຜ່ອນຄວາມທຸກຍາກ ກຳລັງຈັດຕັ້ງປະຕິບັດ 01 ໂຄງການ ຄື ໂຄງການ ປຊກ, ຈັດຕັ້ງປະ ຕິບັດ ຢູ່ 450 ບ້ານ ໃນ 14 ເມືອງທຸກຍາກ ຂອງ 7 ແຂວງເປົ້າໝາຍ (ຜົ້ງສາລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ ແລະ ເຊກອງ), ໄລຍະຈັດຕັ້ງປະຕິບັດໂຄງການແມ່ນເລີ່ມແຕ່ປີ 2024-2028. ຈຸດປະສົງຂອງໂຄງການແມ່ນເພື່ອປັບປຸງຊີວິດການເປັນຢູ່ໃນເຂດຊົນນະບົດ ແລະ ການບໍລິໂພກອາຫານທີ່ຫຼາກຫຼາຍໃຫ້ແກ່ຊຸມຊົນທີ່ມີຄວາມສ່ຽງ, ແລະ ຕອບໂຕ້ໄວ ແລະ ມີປະສິດທິຜົນໃນກໍລະນີເກີດວິກິດການ ຫຼື ພາວະສຸກເສີນ. ປະກອບມີ 3 ໜ້າວຽກຈຸດສຸມຕົ້ນຕໍ ຄື: 1/. ວຽກງານພັດທະນາເສດຖະກິດທ້ອງຖິ່ນ, ປັບປຸງໂຄງລ່າງ ແລະ ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ; 2/. ວຽກງານສ້າງຄວາມສາມາດໃນວຽກງານປັບປຸງຊີວິດການເປັນຢູ່ ແລະ 3/. ວຽກງານສົ່ງເສີມການເຂົ້າເຖິງໂພຊະນາການຂອງຊຸມຊົນ. ການຈັດຕັ້ງປະຕິບັດກິດຈະກຳທັງໝົດແມ່ນໄປຕາມຮູບແບບການພັດທະນາໂດຍຊຸມຊົນເປັນເຈົ້າການ.

ການຈັດຕັ້ງປະຕິບັດໂຄງການໄລຍະຜ່ານມາແມ່ນໄດ້ຮັບຜົນສຳເລັດດີພໍສົມຄວນ ແລະ ບັນລຸຕາມແຜນການທີ່ວາງໄວ້ ເປັນຕົ້ນວຽກງານ ກໍ່ສ້າງຊົນລະປະທານຂະໜາດນ້ອຍ, ນ້ຳລິນ, ກອງທຶນຊ່ວຍເຫຼືອກັນ (ລວມທັງການສ້າງຄວາມເຂັ້ມແຂງການໃນສ້າງແຜນຜະລິດ-ແຜນທຸລະກິດຂະໜາດນ້ອຍ, ການຄຸ້ມຄອງບໍລິຫານກອງທຶນ), ກຸ່ມຜະລິດ, ການສ້າງຕົວແບບ-ວິຊາການຂັ້ນບ້ານ, ການປັບປຸງຊີວິດການເປັນຢູ່ (ການປູກ-ລ້ຽງ ເພື່ອສ້າງລາຍຮັບ ແລະ ຕອບສະໜອງສະບຽງອາຫານ), ວຽກໂພຊະນາການ (ແຜນງານໜຶ່ງດຽວ) ແລະ ການປ່ຽນແປງພຶດຕິກຳການຜະລິດພືດທີ່ຕິດພັນກັບການບໍລິໂພກອາຫານທີ່ຫຼາກຫຼາຍ ແລະ ມີໂພຊະນາການທີ່ດີ, ການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດດ້ານການຜະລິດກະສິກຳ ແລະ ການຄຸ້ມຄອງ-ບໍລິຫານຊຸມຊົນຂັ້ນບ້ານ. ໄປຄຽງຄູ່ກັບຜົນສຳເລັດນີ້, ການຈັດຕັ້ງປະຕິບັດກໍ່ຍັງພົບພໍ້ກັບຂໍ້ຫຍຸ້ງຍາກ ເປັນຕົ້ນແມ່ນ ເສັ້ນທາງເຂົ້າຫາບາງບ້ານເປົ້າໝາຍເປ່ເພ ແລະ ມີການປັບປຸງ-ກໍ່ສ້າງ (ບາງບ້ານແມ່ນໄດ້ເດີນທາງໂດຍເຮືອ ແລະ ຍ່າງ). ພ້ອມດຽວກັນນີ້, ໃນຊ່ວງລະດູຝົນກໍ່ມີໄພພິບັດທາງທຳມະຊາດທີ່ເຮັດໃຫ້ເສັ້ນທາງເຂົ້າຫາບ້ານເປົ້າໝາຍໄດ້ຮັບຄວາມເສຍຫາຍ (ເສັ້ນທາງເປ່ເພ-ຖືກຕັດຂາດ, ຂົວເປ່ເພ) ເປັນສາເຫດເຮັດໃຫ້ ການຂົນສົ່ງວັດສະດຸກໍ່ສ້າງ ແລະ ຈຸດກໍ່ສ້າງຊົນລະປະທານຂະໜາດນ້ອຍອາດຕ້ອງໄດ້ເຮັດການປະເມີນ-ສຳຫຼວດ-ອອກແບບຄືນໃໝ່ ສຳລັບ ບາງຈຸດທີ່ໄດ້ຮັບຄວາມເສຍຫາຍຈາກການເຊາະເຈື່ອນ ແລະ ດິນທັບຖົມ. ນອກນີ້ ບາງເຂດກໍ່ຍັງມີຄວາມສ່ຽງຈາກລູກລະເບີດທີ່ບໍ່ທັນແຕກ.

ການຈັດຕັ້ງປະຕິບັດໂຄງການແມ່ນໄດ້ຮັບການຮ່ວມມື-ຊ່ວຍເຫຼືອເປັນຢ່າງດີ ຈາກອົງການປົກຄອງຂັ້ນສູນກາງ ແລະ ທ້ອງຖິ່ນ, ລວມທັງ ການຕິດຕາມ-ຊຸກຍູ້ຂອງຜູ້ໃຫ້ທຶນ ກໍຄືຄະນະທີມງານຊ່ຽວຊານ ຂອງທະນາຄານໂລກ ຢ່າງເປັນປົກກະຕິຕໍ່ເນື່ອງ ເຮັດໃຫ້ການຈັດຕັ້ງປະຕິບັດມີຜົນສຳເລັດສູງໃນແຕ່ລະໄລຍະ.

## II. ສັງເກດຕີລາຄາ ແລະ ຖອດຖອນບົດຮຽນ

### 2.1. ສິ່ງທ້າທາຍ

1) ຄວາມຕ້ອງການຊ່ວຍເຫຼືອ ຂອງ ປະຊາຊົນໃນການຜະລິດກະສິກໍາເປັນສະບຽງ-ສິນຄ້າ, ການແກ້ໄຂຄວາມທຸກຍາກ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດຢູ່ເຂດເປົ້າໝາຍໂຄງການຍັງມີສູງ, ແຕ່ທຶນພັດທະນາຍັງມີຈໍາກັດ.
2) ໄພພິບັດທາງທໍາມະຊາດ ແລະ ສະພາບເສັ້ນທາງເຂົ້າຫາບ້ານເປົ້າໝາຍຂອງໂຄງການຍັງເປັນສາຍເຫດທີ່ເຮັດໃຫ້ການຈັດຕັ້ງປະຕິບັດບາງກິດຈະກໍາຊັກຊ້າ.
3) ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ເຂດເປົ້າໝາຍໂຄງການ ເປັນບັນຫາຕົ້ນຕໍໜຶ່ງທີ່ເຮັດໃຫ້ການຈັດຕັ້ງປະຕິບັດບາງກິດຈະກໍາຊັກຊ້າ. ການສື່ສານ (ພາສາຊົນເຜົ່າ) ກໍ່ເປັນບັນຫາໜຶ່ງທີ່ເຮັດໃຫ້ການຖ່າຍທອດບົດຮຽນດ້ານວິຊາການອາດຈະບໍ່ໄດ້ດີເທົ່າທີ່ຄວນ.

### 2.2. ຖອດຖອນບົດຮຽນ

1) ການພັດທະນາກົນໄກລະດົມທຶນ ແລະ ຂົນຂວາຍຜູ້ໃຫ້ທຶນເຂົ້າຮ່ວມການຈັດຕັ້ງປະຕິບັດ ແຜນຍຸດທະສາດ ແລະ ແຜນລະດົມສໍາລັບວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ໃນເຂດເມືອງທຸກຍາກ ຫ່າງໄກສອກຫຼີກ ຂອງ ສປປ ລາວ ສໍາລັບປີ 2026-2030 ມີຄວາມສໍາຄັນຫຼາຍ.
2) ການສ້າງຄວາມເປັນເຈົ້າ ແລະ ມອບຄວາມຮັບຜິດຊອບ ໃຫ້ແກ່ຊຸມຊົນ ແລະ ຂະແໜງການກ່ຽວຂ້ອງຂັ້ນເມືອງແຕ່ຫົວທີຈະເຮັດໃຫ້ມີຄວາມຍືນຍົງ.
3) ການສ້າງຄວາມເຂັ້ມແຂງ ໃຫ້ແກ່ ການຄຸ້ມຄອງ-ບໍລິຫານຊຸມຊົນຂັ້ນບ້ານ ແລະ ການສ້າງຕົວແບບ-ວິຊາການຂັ້ນບ້ານແມ່ນມີຄວາມສໍາຄັນຕໍ່ການຈັດຕັ້ງປະຕິບັດກິດຈະກໍາຕໍ່ເນື່ອງ ແລະ ມີຄວາມຍືນຍົງ ລວມທັງການປະກອບສ່ວນສໍາຄັນໃນກໍານົດແຜນພັດທະນາບ້ານ ແລະ ຄວາມເປັນເຈົ້າການຂອງຊຸມຊົນສູງຂຶ້ນ.
4) ການນໍາໃຊ້ນະວັດຕະກໍາ ແລະ ເຕັກໂນໂລຊີໃໝ່ໆ ຈະຊ່ວຍໃຫ້ການປະຕິບັດວຽກງານເປັນລະບົບ ແລະ ມີປະສິດທິພາບຫຼາຍຂຶ້ນ.

## III. ທິດທາງແຜນການປີ 2026

1) ກະຊວງຈັດກອງປະຊຸມສະພາບໍລິຫານກອງທຶນຫຼຸດຜ່ອນຄວາມທຸກຍາກ ໃນເດືອນກຸມພາ ຫຼື ເດືອນມີນາ 2026 ເພື່ອປຶກສາຫາລືວຽກງານທີ່ສາຄັນ ໂດຍສະເພາະແມ່ນການທົບທວນການຈັດຕັ້ງປະຕິບັດຜ່ານມາ ແລະ ແຜນການໃນຕໍ່ໜ້າ.
2) ສືບຕໍ່ຈັດຕັ້ງປະຕິບັດກິດຈະກໍາຂອງໂຄງການ ປຂກ ຢູ່ 450 ບ້ານ ໃນ 14 ເມືອງທຸກຍາກ ຂອງ 7 ແຂວງເປົ້າໝາຍ (ຜົ້ງສາລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ ແລະ ເຊກອງ) ຕາມແຜນການລວມທັງກິດຈະກໍາທີ່ໄດ້ຮັບທຶນຊ່ວຍເຫຼືອລ້າຈາກອົງການ SDC.
3) ກະຊວງໃຫ້ການທົບທວນ ແລະ ປະເມີນຜົນໄລຍະກາງ ໂຄງການ ປຂກ ໃນທ້າຍເດືອນມັງກອນ ຫາ ຕົ້ນເດືອນກຸມພາ 2026.
4) ກະຊວງແຜນຈັດຕັ້ງປະຕິບັດແຜນລະດົມທຶນສໍາລັບວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ໃນເຂດເມືອງທຸກຍາກ ຫ່າງໄກສອກຫຼີກ ຂອງ ສປປ ລາວ ສໍາລັບປີ 2026-2030.

ດັ່ງນັ້ນ, ຈິ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ ແລະ ພິຈາລະນາໃຫ້ທິດຊີ້ນໍາ ຕາມທາງຄວນດ້ວຍ.

ຮກ. **ຜູ້ອໍານວຍການ**

ກະຊວງກະສິກໍາ ແລະ ສິ່ງແວດລ້ອມ
ກອງທຶນຫຼຸດຜ່ອນຄວາມທຸກຍາກ

ປອ. ວົງປະພັນ ມະນີວົງ